**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ໄຊຍະບູລີ

ເລກທີ 81/ຈຂ.ຊຍ
ໄຊຍະບູລີ, ວັນທີ 11.7.2024

# ຄຳສັ່ງ
# ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ ຕໍ່ວຽກງານທະບຽນສານ

**ເຖິງ: ຫົວໜ້າພະແນກການ, ອົງການ,ກົມກອງອ້ອມຂ້າງແຂວງ, ເຈົ້າເມືອງ 11 ເມືອງ**

- ອີງຕາມ ກົດໝາຍວ່າການປົກຄອງທ້ອງຖິ່ນ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 1786/ກຍ, ລົງວັນທີ 28 ທັນວາ 2023;
- ອີງຕາມ ໜັງສືສະເໜີຂອງພະແນກຍຸຕິທຳ ສະບັບເລກທີ 471/ພຍທ, ລົງວັນທີ 5.7.2024

ໃນໄລຍະຜ່ານມາ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນສານ ແມ່ນມີຄວາມສຳຄັນຫລາຍໃນການປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ມີຄວາມເປັນລະບຽບຮຽບຮ້ອຍ ສັງຄົມມີຄວາມຍຸຕິທຳ. ຜ່ານການຈັດຕັ້ງປະຕິບັດຕົວຈິງຍັງມີຫລາຍພາກສ່ວນ ນັບທັງພາກລັດ, ເອກະຊົນທີ່ຍັງບໍ່ທັນຮັບຮູ້ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນ, ຜົນປະໂຫຍດທີ່ໄດ້ຮັບຈາກການຢັ້ງຢືນຂອງອົງການທະບຽນສານ ແລະ ຍັງບໍ່ທັນເຂົ້າໃຈແຈ້ງລະຫວ່າງ ພາລະບົດບາດ, ສິດໜ້າທີ່ຂອງອົງການທະບຽນສານ ແລະ ສານປະຊາຊົນ. ຄວາມສຳຄັນຕໍ່ການຢັ້ງຢືນຂອງອົງການທະບຽນສານ ຫລາຍພາກສ່ວນຍັງຖືເບົາ, ບໍ່ນຳເອົາສັນຍາ ຫຼື ເອກະສານມາຢັ້ງຢືນຄວາມຖືກຕ້ອງນຳອົງການທະບຽນສານຊຶ່ງເຫັນວ່າ ມີຫລາຍສັນຍາ ຫຼື ເອກະສານບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ ຈຶ່ງພາໃຫ້ ມີຂໍ້ຂັດແຍ່ງ ຫຼື ເກີດຄະດີຂຶ້ນ.

ເພື່ອສ້າງຄວາມຮັບຮູ້, ເຂົ້າໃຈຂອງສັງຄົມ ກ່ຽວກັບວຽກທະບຽນສານ ແລະ ເຮັດໃຫ້ກົດໝາຍວ່າດ້ວຍທະບຽນສານໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວແຂວງ.

## ເຈົ້າແຂວງ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການ, ອົງການ,ກົມກອງອ້ອມຂ້າງແຂວງ, ອົງການປົກຄອງເມືອງ, ພາກສ່ວນທີ່ກ່ຽວຂ້ອງຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳກ່ຽວກັບວຽກງານທະບຽນສານຢ່າງເຂັ້ມງວດ;

**2.** ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ຕ້ອງເອົາສັນຍາ ຫຼື ເອກະສານປະເພດຕ່າງໆໄປຢັ້ງຢືນນຳ ອົງການທະບຽນສານ ບ່ອນທີ່ຕົນອາໄສຢູ່ ຫຼື ບ່ອນທີ່ໃກ້ຄຽງ ຫຼື ບ່ອນປະຕິບັດສັນຍາ ຫຼື ບ່ອນອະສັງຫາລິມະຊັບຕັ້ງຢູ່ ຊຶ່ງປະກອບມີ: ສັນຍາ, ພິໄນກຳ, ກຳມະສິດກ່ຽວກັບຊັບເດີມ, ສິນສົມສ້າງ ຫຼື ຊັບຮ່ວມ, ເອກະສານສະບັບສຳເນົາຖ່າຍ, ລາຍເຊັນ ຫຼື ໂປ້ມື, ຮູບຖ່າຍສົມທຽບກັບຕົວບຸກຄົນ, ເວລາ ແລະ ສະຖານທີ່ຍື່ນເອກະສານ, ການແປພາສາ, ເອກະສານກ່ຽວກັບມູນມໍຣະດົກ, ເອກະສານອື່ນໆ ຕາມມາດຕາ 9 ຂອງກົດໝາຍວ່າດ້ວຍທະ ບຽນສານ;

3. ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກແຜນການ ແລະ ການລົງທຶນ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງເອົາສັນຍາຊື້-ຂາຍ, ແລກປ່ຽນ, ເຊົ່າຊື້, ມອບ ແລະ ໂອນພາຫະນະທີ່ມີການຂຶ້ນທະບຽນ; ສັນຍາຊື້-ຂາຍ, ແລກປ່ຽນ, ເຊົ່າ, ມອບ ແລະ ໂອນອະສັງຫາລິມະຊັບ; ສັນຍາກູ້ຢືມທີ່ມີການຄໍ້າປະກັນດ້ວຍອະສັງຫາລິມະຊັບ ຫຼື ພາຫະນະທີ່ມີທະບຽນ; ສັນຍາຮຸ້ນສ່ວນ; ສັນຍາຊື້-ຂາຍ, ມອບໂອນຮຸ້ນ ຫຼື ກິດຈະການທຸກປະເພດ; ສັນຍາສຳປະທານ ຕ້ອງມາຢັ້ງຢືນນຳອົງການທະບຽນສານ ຕາມມາດຕາ 10 ຂອງກົດໝາຍວ່າດ້ວຍທະບຽນສານ. ສຳລັບ ພະແນກ ການອື່ນທີ່ມີຈຸດປະສົງຈະເຮັດສັນຍາປະເພດຕ່າງໆ ຕ້ອງມາຢັ້ງຢືນນຳອົງການທະບຽນສານ;

4. ໃຫ້ບັນດາພະແນກການ, ອົງການກົມກອງອ້ອມຂ້າງແຂວງ, ອົງການປົກຄອງເມືອງທີ່ມີຈຸດປະສົງໃນ ການເຮັດສັນຍາປະເພດຕ່າງໆ ລະຫວ່າງ ອົງການປົກຄອງແຂວງ, ອົງການປົກຄອງເມືອງ ເຊັ່ນກັບພາກສ່ວນອື່ນ ຕ້ອງໃຫ້ຂະແໜງຍຸຕິທຳ ເຂົ້າຮ່ວມແຕ່ເບື້ອງຕົ້ນ ເພື່ອເຮັດສັນຍາໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມຫຼັກການໃນການເຮັດ ສັນຍາ;

5. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ທີ່ນຳເອົາສັນຍາ ຫຼື ເອກະສານອື່ນ ມາຢັ້ງຢືນນຳອົງການທະບຽນສານ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ແຕ່ລະໄລຍະ;

6. ໃຫ້ຂະແໜງຍຸຕິທຳ ຊຸກຍູ້ ແລະ ປະສານສົມທົບ ກັບບັນດາພະແນກການ, ອົງການ,ກົມກອງອ້ອມຂ້າງແຂວງ, ອົງການປົກຄອງເມືອງ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ, ຄຳສັ່ງ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານທະບຽນສານ ໃຫ້ຮັບຮູ້, ເຂົ້າໃຈເຖິງຄວາມໝາຍ ຄວາມສຳຄັນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນທະບຽນສານ;

7. ໃຫ້ຄະນະພັກ, ຄະນະນຳອົງການປົກຄອງເມືອງ ເອົາໃຈໃສ່ ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ວຽກງານທະບຽນສານ ເປັນຕົ້ນ: ງົບປະມານ, ສະຖານທີ່, ພາຫະນະ, ອຸປະກອນຮັບໃຊ້ ທີ່ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ. ພ້ອມກັນນັ້ນ ກໍ່ເປັນການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ;

8. ມອບໃຫ້ຂະແໜງຍຸຕິທຳ ເປັນເສນາທິການໃຫ້ແກ່ອົງການປົກຄອງ ແລະ ເປັນເຈົ້າການໃນການຊຸກຍູ້, ປະສານສົມທົບ, ຕິດຕາມ, ກວດກາ ການປະຕິບັດວຽກງານທະບຽນສານໃຫ້ໄດ້ຮັບຜົນດີ;

9.ໃຫ້ອົງການທະບຽນສານແຕ່ລະຂັ້ນສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທະບຽນສານໃຫ້ສາຍຕັ້ງ, ສາຍຂວາງຢ່າງເປັນປົກກະຕິ

10. ບັນດາທ່ານຫົວໜ້າພະແນກການ, ອົງການ,ກົມກອງອ້ອມຂ້າງແຂວງ, ບັນດາເຈົ້າເມືອງ, ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງສະບັບເລກທີ 126/ຈຂ.ຊຍ, ລົງວັນທີ 8 ພຶດສະພາ 2020.

**ເຈົ້າແຂວງ.**

ແຂວງໄຊຍະ... ເຈົ້າແຂວງ

ພົງສະຫວັນ ສິດທະວົງ